ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ ເລກທີ 252 /ກຊສ

ນະຄອນຫຼວງວຽງຈັນ, ວັນທີ 6 ມິຖຸນາ 2007

**ຄຳສັ່ງແນະນຳ**

**ວ່າດ້ວຍການຈັດຕັ້ງປະຕິບັດດຳລັດຂອງນາຍົກລັດຖະມົນຕີ**

**ກ່ຽວກັບຊັບພະຍາກອນທຳມະຊາດທີ່ເປັນຢາ ເລກທີ 155/ນຍ, ລົງວັນທີ 30 ກັນຍາ 2003**

ເຖິງ: ບັນດາຫົວໜ້າພະແນກ, ຫົວໜ້າພະແນກສາທາລະນະສຸກແຂວງ ແລະ ນະຄອນຫຼວງ

ເພື່ອປະຕິບັດກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ ສະບັບເລກທີ 01/ສພຊ, ລົງວັນທີ 08/04/ 2000, ດຳລັດວ່າດ້ວຍຊັບພະຍາກອນທຳມະຊາດທີ່ເປັນຢາ ເລກທີ 155/ນຍ, ລົງວັນທີ 30 ກັນຍາ 2003 ແລະ ຂໍ້ຕົກລົງຂອງນາຍົກລັດຖະມົນຕີວ່າດ້ວຍການຮັບຮອງເອົາຜົນກອງປະຊຸມວຽກງານຄຸ້ມຄອງປ່າໄມ້ທົ່ວປະເທດ ຄັ້ງວັນທີ 01/03/2007 ສະບັບເລກທີ 25/ນຍ, ລົງວັນທີ 03/04/2007.

ຜ່ານການຕິດຕາມເກັບກຳສະພາບການ ແລະ ຜ່ານການຮັບລາຍງານຂອງຂະແໜງການຈາກທ້ອງຖິ່ນຕ່າງ ໆເຫັນວ່າການຂຸດຄົ້ນຊັບພະຍາກອນທຳມະຊາດທີ່ເປັນຢາ ໃນທົ່ວປະເທດ ມີລັກສະນະຊະຊາຍ, ບໍ່ຖືກຕ້ອງຕາມເຕັກນິກວິຊາການ ການຂຸດຄົ້ນ ແລະ ການຜະລິດເຄິ່ງສຳເລັດຮູບມີລັກສະນະຟູມເຟືອຍ, ຜູ້ຂຸດຄົ້ນສ່ວນໃຫຍ່ຂາດສະຕິຄວາມຮັບຜິດຊອບ, ບໍ່ໄດ້ຄຳນຶງເຖິງການປົກປັກຮັກສາສິ່ງແວດລ້ອມ ແລະ ມີທ່າອ່ຽງເຮັດໃຫ້ຕົ້ນໄມ້ທີ່ເປັນຢາຫຼາຍຊະນິດຈະສູນພັນໄປ.

ອີງໃສ່ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 049/ຫສນຍ.ກລຂ, ລົງວັນທີ 27 ມັງກອນ 2006.

**ສະນັ້ນ, ລັດຖະມົນຕີວ່າການກະຊວງສາທາລະນະສຸກອອກຄຳສັ່ງແນະນຳດັ່ງນີ້:**

1. ໃຫ້ບັນດາພະແນກສາທາລະນະສຸກແຂວງ, ນະຄອນຫຼວງສົມທົບກັບພະແນກກະສິກຳ-ປ່າໄມ້, ອຸດສາຫະກຳ, ການຄ້າແຂວງ ແລະ ອຳນາດການປົກຄອງແຕ່ລະຂັ້ນເອົາໃຈໃສ່ເຜີຍແຜ່ ແລະ ຈັດຕັ້ງປະຕິບັດ, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດດຳລັດ ເລກທີ 155/ນຍ, ລົງວັນທີ 30 ກັນຍາ 2003 ກ່ຽວກັບຊັບພະຍາກອນທຳມະຊາດທີ່ເປັນຢາຢ່າງເຂັ້ມງວດ. ພ້ອມກັນນັ້ນ, ກໍ່ຕ້ອງຈັດຕັ້ງເຜີຍແຜ່ບັນຊີຊັບພະຍາກອນທຳມະຊາດທີ່ເປັນຢາ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ, ແນໃສ່ເພື່ອຍົກ ສູງປະສິດທິຜົນທາງດ້ານເສດຖະກິດ ແລະ ທັງເປັນການປົກປັກຮັກສາຊັບພະຍາກອນທຳມະຊາດທີ່ເປັນຢາຂອງຊາດ ໃຫ້ມີຄວາມຍືນຍົງຕະຫຼອດໄປ.
2. ການຄຸ້ມຄອງຊັບພະຍາກອນທຳມະຊາດທີ່ເປັນຢາໃຫ້ປະຕິບັດຕາມມາດຕາ 10 ຂອງດຳລັດ ເລກທີ 155/ນຍ, ລົງວັນທີ 30 ກັນຍາ 2003 ວ່າດ້ວຍຊັບພະຍາກອນທຳມະຊາດທີ່ເປັນຢາ.
3. ພະແນກສາທາລະນະສຸກແຂວງ, ນະຄອນຫຼວງສົມທົບພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງເພື່ອສຳຫຼວດ, ຂຶ້ນບັນຊີຄຸ້ມຄອງ ແລະ ນຳໃຊ້ໂດຍແບ່ງບັນຊີຊັບພະຍາກອນທຳມະຊາດ ທີ່ເປັນຢາ

ອອກຈາກເຄື່ອງປ່າຂອງດົງໃຫ້ຈະແຈ້ງ ໂດຍອີງໃສ່ບັນຊີທີ່ໄດ້ກຳນົດໄວ້ໃນ ດຳລັດເລກທີ 155/ນຍ, ລົງວັນທີ 30 ກັນຍາ 2003, ຂໍ້ຕົກລົງຂອງນາຍົກ, ສະບັບເລກທີ 25/ນຍ, ລົງວັນທີ 03/04/2007 ແລະ ປະສານງານໃນການຄຸ້ມຄອງການຂຸດຄົ້ນ, ປຸງແຕ່ງ, ຜະລິດ ແລະ ນຳໃຊ້ໃຫ້ມີປະສິດທິຜົນຢູ່ໃນທ້ອງຖິ່ນຂອງຕົນ.

4. ຫ້າມຂຸດຄົ້ນຊັບພະຍາກອນທຳມະຊາດທີ່ເປັນຢາ ເພື່ອສົ່ງອອກໂດຍກົງຢ່າງຊະຊາຍ, ຄວນຕ້ອງໄດ້ຮັບການປຸງແຕ່ງເປັນຜະລິດຕະພັນເຄິ່ງສຳເລັດຮູບ ຫຼື ດີທີ່ສຸດແມ່ນຜະລິດຕະພັນສຳເລັດຮູບຢູ່ພາຍໃນປະເທດເສຍກ່ອນ ແລ້ວຈຶ່ງຈຳໜ່າຍ ຫຼື ສົ່ງອອກໄປຕ່າງປະເທດ.
5. ການສ້າງຕັ້ງໂຮງງານຜະລິດຢາພື້ນເມືອງ ຫຼື ໂຮງງານຖອດຣິດພືດ, ຕົ້ນໄມ້ທີ່ເປັນຢາແບບຫັດຖະກຳ ຫຼື ແບບອຸດສະຫະກຳ ຕ້ອງໄດ້ຮັບອະນຸມັດຈາກກະຊວງສາທາລະນະສຸກເສຍກ່ອນ.
6. ກ່ອນການອະນຸມັດໃຫ້ຂຸດຄົ້ນຊັບພະຍາກອນທຳມະຊາດທີ່ເປັນຢາ, ຜູ້ສະເໜີຂໍຂຸດຄົ້ນຕ້ອງໄດ້ສ້າງແຜນການປູກ ຫຼື ລ້ຽງທົດແທນແຕ່ຫົວທີໂລດ.
7. ການຂຸດຄົ້ນຊັບພະຍາກອນທຳມະຊາດທີ່ເປັນຢາ, ຕ້ອງໄດ້ຜ່ານການພິຈາລະນາເຫັນດີ ແລະ ອະນຸຍາດຈາກຂະແໜງການສາທາລະນະສຸກເສຍກ່ອນ.
8. ໃຫ້ບັນດາພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຄຳສັ່ງແນະນຳສະບັບນີ້ຢ່າງເຂັ້ມງວດ. ຄຳສັ່ງແນະນຳສະບັບນີ້ ມີຜົນສັກສິດນຳໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງສາທາລະນະສຸກ

ດຣ. ປອນເມກ ດາລາລອຍ

## ບັນຊີພືດທີ່ເປັນຢາ ກະຊວງສາທາລະນະສຸກຄຸ້ມຄອງ

| ລ/ດ | ຊື່ລາວ | ຊື່ວິທະຍາສາດ |
|---|---|---|
| 1 | ກູດຕີນຮຸ້ງ | Helmintostachus zeylanica (L.) Hook. |
| 2 | ກົ່ງສະເດັນ | Croton sp. |
| 3 | ຂົມລະຫວານຈົ້ | Evodia lepta (Spreng) Merr. |
| 4 | ຂີງແດງປາກັ້ງ | Homalomena spp |
| 5 | ຂີງຜາ | Polygonatum spp |
| 6 | ຂະຍອມພູ | Rauwolfia spp. |
| 7 | ແຄ່ | Cinnamomum spp. |
| 8 | ຈັນໄດ | Dracaena cambodiana P. |
| 9 | ສົ້ມມໍ | Terminalia chebula Retz. |
| 10 | ແສງເບື່ອ | Strychnos nux vomica L. |
| 11 | ແສງຄໍາຕົ້ນ | Terminalia nigrovenulosa P. |
| 12 | ສ່ອງຟ້າ | Clausena harmandiana P. |
| 13 | ສີໄຄຕົ້ນ | Litseea cubeba (Lour.) Pers. |
| 14 | ຢີກບໍ່ຖອງ | Eurycoma longifolia Jack. |
| 15 | ຍໍປ່າ | Morinda tinctoria Roxb. |
| 16 | ດອກເຜີ້ງ | Dendrobium spp |
| 17 | ຕູມກາແດງ | Strychnos spp |
| 18 | ຕ່ອມ | Stephania spp |
| 19 | ຕີນເປັດ | Alstonia scholaris L. |
| 20 | ຝາງແດງ | Caesalpinia sappan Linn. |
| 21 | ມັນອ້ອມລີງ | Polygonum multiflorum Thunb |
| 22 | ມັນຂາໄກ່ | Codonopsis sp. |
| 23 | ຢາຫົວ | Smilax glabra Roxb. |
| 24 | ຫົວສາມສິບ | Stemona tuberosa Lour. |
| 25 | ຫວ້ານລາຍ | Anoectochilus formosus Hayana |
| 26 | ຫາດມີ້ | Artocarpus lakoocha Roxb. |
| 27 | ເຫັດທີ່ເປັນຢາຕ່າງໆ | Medicinal mushroom species |
| 28 | ອຽນດ່ອນ | Osbeckia chinensis L. |
| 29 | ແຝກຫອມ | Vetiveria zizanioides (L.) Nash. |
| 30 | ເຄືອແຮມ | Coscinium spp |